## II ກ . ກະຊວງ ຄົມມະນາຄົມ ໂຍທາ ແລະ ຂົນສົ່ງ (1975-1982)

ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍຢ່າງສົມບູນໃນປີ 1975, ກະຊວງຄົມມະນາຄົມໂຍທາ ແລະ ຂົນສົ່ງ ເປັນກະຊວງໜຶ່ງທີ່ເປັນເສນາທິການໃຫ້ແກ່ລັດຖະບານໃນດ້ານການຄຸ້ມຄອງ, ບໍລິຫານ ແລະ ບັນຊາກ່ຽວກັບວຽກງານຄົມມະນາຄົມ, ຂົນສົ່ງ, ເຄຫາສະຖານ ແລະ ນໍ້າປະປາ ຊຶ່ງເປັນຂະແໜງການສໍາຄັນໃນການພັດທະນາພື້ນຖານໂຄງລ່າງ ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຂອງຊາດ ແຕ່ວຽກງານໄປສະນີ ແລະ ໂທລະຄົມມະນາຄົມ ຈຶ່ງໄດ້ມາເຕົ້າໂຮມກັບວຽກງານອື່ນທີ່ກ່າວຂ້າງເທິງໃນປີ 1988. ພາຍຫລັງການປະຕິວັດຊາດປະຊາທິປະໄຕໄດ້ສໍາເລັດຢ່າງສົມບູນແລ້ວ, ພັກ ແລະ ລັດເຮົາ ໄດ້ຖືເອົາການຄົມມະນາຄົມເປັນຂະແໜງປາຍແຫລມໃນການພັດທະນາແຫ່ງຊາດ.

ກະຊວງ ຄົມມະນາຄົມ ໂຍທາ ແລະ ຂົນສົ່ງ (1975-82) ປະກອບດ້ວຍຄະນະພັກ, ຄະນະນໍາຂອງກະຊວງໂດຍມີ ທ່ານ ສະນັ່ນ ສຸດທິຈັກ ກໍາມະສູນກາງສູນກາງພັກ ເປັນລັດຖະມົນຕີວ່າການ, ມີ ລັດຖະມົນຕີຊ່ວຍວ່າການຈໍານວນໜຶ່ງ, ບັນດາກົມກອງຕ່າງໆ ລວມທັງບໍລິສັດ ໄດ້ເປັນຫົວຈັກຫລັກແຫລ່ງໃນການແກ້ໄຂວຽກງານຄຸ້ມຄອງມະຫາພາກ ແລະ ວິຊາສະເພາະຢ່າງເປັນເຈົ້າການ ແລະ ດ້ວຍຄວາມຮັບຜິດຊອບສູງ ຈຶ່ງສາມາດຜ່ານຜ່າໄດ້ທຸກຄວາມຫຍຸ້ງຍາກສັບສົນຢູ່ໃນໄລຍະທໍາອິດຂອງການສ້າງຕັ້ງລະບົບການຈັດຕັ້ງຂອງກະຊວງ ໂດຍໄດ້ເອົາສອງກໍາລັງມາປະສົມປະສານກັນ ຄືມີພາກສ່ວນທີ່ມາຈາກເມືອງວຽງໄຊ (ເຂດປົດປ່ອຍເກົ່າ) ແລະ ພາກສ່ວນທີ່ເຄີຍເຮັດວຽກຢູ່ກະຊວງດັ່ງກ່າວຂອງລະ ບອບເກົ່າ.

# ໂຄງຮ່າງການຈັດຕັ້ງ ກະຊວງ ຄົມມະນາຄົມ ໂຍທາ ແລະ ຂົນສົ່ງ

**ທ່ານ ສະໜັ່ນ ສຸດທິຈັກ**
ກຳມະການສູນກາງພັກປະຊາຊົນປະຕິວັດລາວ, ລັດຖະມົນຕີວ່າການ (1975-81)

**ທ່ານ ຄຳຜຸຍ ແກ້ວບົວລະພາ**
ຮັກສາການແທນ ລັດຖະມົນຕີວ່າການ (1981-82)

**ທ່ານ ສິງກະໂປ ສີໂຄດຈຸນນະມານີ**
ລັດຖະມົນຕີຊ່ວຍວ່າການ (1975-82)

**ທ່ານ ເຊີນ ເພັດສັງຫານ**
ລັດຖະມົນຕີຊ່ວຍວ່າການ (1980-81)

**ທ່ານ ຄຳລອດ ສີດລາກອນ**
ລັດຖະມົນຕີຊ່ວຍວ່າການ (1980-81)

ຫ້ອງການ
**ທ່ານ ທິມະກອນ ມະໂນທັມ**
(1975-82)

ກົມຈັດຕັ້ງ
**ທ່ານ ບຸນຈິມ ສິງສະຫວ່າງ**
(1975-83)

ກົມສະຖິຕິແຜນການການເງິນ
**ທ່ານ ຄຳລອດ ສີດລາກອນ**
(1976-80)

ກົມຄົມມະນາຄົມ
**ທ່ານ ເວດ ໄຊຄຳພິທູນ**
(1976-82)

ກົມຂົນສົ່ງ
**ທ່ານ ບົວສີ ລໍວັນໄຊ**
(1976-80)

ກົມເຄຫາ-ຜັງເມືອງ
**ທ່ານ ດາລາ ວົງວິຈິດ**
(1975-82)

ກົມສະໜອງວັດຖຸ
**ທ່ານ ທອງສຸກ ສາຍສັງຄີ**
(1975-82)

ກົມທາງເຫຼັກ
**ທ່ານ ເຊີນ ເພັດສັງຫານ**
(1977-80)

ໂຮງຮຽນຄົມມະນາຄົມ ແລະ ຂົນສົ່ງ
**ທ່ານ ດາວເພັດ ບົວພາ**
X

ໂຮງຮຽນກໍ່ສ້າງເຄຫາສະຖານ
**ທ່ານ ບຸນເຫຼືອມ ສີສຸລາດ**
1

- ກອງຂົນສົ່ງນ້ຳມັນເຊື້ອໄຟ
- ກອງຂົນສົ່ງສູນກາງ
- ສະຫະບໍລິສັດຂົນສົ່ງລັດ-ເອກະຊົນ
- ບໍລິສັດ ກໍ່ສ້າງແຫ່ງຊາດ
- ກອງກົນຈັກໜັກເກົ້າລ້ຽວ
- ກອງວັດຖຸເບົາຫຼັກ 7

ໂຄງປະກອບການຈັດຕັ້ງຂອງກະຊວງ ຄົມມະນາຄົມ ໂຍທາ ແລະ ຂົນສົ່ງ (1975-82) ປະ ກອບດ້ວຍ 1 ຫ້ອງການ, 7 ກົມ (ກົມຈັດຕັ້ງ, ກົມສະຖິຕິ ແຜນການ ແລະ ການເງິນ, ກົມຄົມມະນາ ຄົມ, ກົມຂົນສົ່ງ, ກົມເຄຫາຜັງເມືອງ, ກົມສະໜອງວັດຖຸ, ກົມທາງເຫລັກ) 4 ກອງ (ຂົນສົ່ງນໍ້າມັນເຊື້ອໄຟ, ຂົນສົ່ງສູນກາງ, ກົນຈັກໜັກເກົ້າລ້ຽວ, ວັດຖຸກົນຈັກໜັກຫລັກ 7, ສອງບໍລິສັດ (ບໍລິສັດກໍ່ສ້າງແຫ່ງຊາດ ແລະ ສະຫະບໍລິສັດຂົນສົ່ງລັດ-ເອກະຊົນ ແລະ ສອງໂຮງຮຽນ (ຄົມມະນາຄົມ ແລະ ກໍ່ສ້າງເຄຫາສະຖານຊັ້ນສູງ).

ຍ້ອນມີການຊີ້ນຳຂອງຄະນະພັກ, ຄະນະນຳກະຊວງ, ບຸກຄົນທີ່ເປັນຫົວໜ້າກົມນັ້ນ ຕ້ອງເປັນບຸກຄົນທີ່ຮັບປະກັນທາງດ້ານຄຸນທາດການເມືອງ ໂດຍໄດ້ເລືອກເຟັ້ນເອົາບຸກຄົນທີ່ຜ່ານການປະຕິວັດເພື່ອຊີ້ນຳນຳພາທາງດ້ານແນວຄິດການເມືອງ ແລະ ການຈັດຕັ້ງ, ສ່ວນຮອງຫົວໜ້າກົມນັ້ນສາມາດ ເລືອກເອົານັກວິຊາການທີ່ເຄີຍຜ່ານວຽກງານໃນລະບອບເກົ່າມາກ່ອນ ຫລື ອາດເລືອກເອົາບຸກຄົນ ທີ່ມາຈາກເຂດປະຕິວັດ. ສ່ວນຂັ້ນພະແນກ ແລະ ວິຊາການທົ່ວໄປນັ້ນ ສ່ວນໃຫຍ່ ກໍໄດ້ນຳໃຊ້ພະນັກ ງານທີ່ເຄີຍສັງກັດຢູ່ໃນກົມກອງນັ້ນມາກ່ອນ. ກະຊວງຄົມມະນາຄົມ ໂຍທາ ແລະ ຂົນສົ່ງ ໄດ້ເຮັດພາ ລະບົດບາດຂອງຕົນຢ່າງເຕັມຄວາມສາມາດ ອີງຕາມການມອບໝາຍຂອງພັກ ແລະ ລັດ ໂດຍສະເພາະ ແມ່ນໄດ້ປະກອບສ່ວນໃນການປະຕິບັດສອງໜ້າທີ່ໃຫຍ່ຍຸດທະສາດ ຄື ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ໃນໄລຍະ 1975-82 ກະຊວງຄົມມະນາຄົມ ໂຍທາ ແລະ ຂົນສົ່ງ ໄດ້ຮັບຜິດຊອບວຽກງານ ຄົມມະນາຄົມ-ຂົນສົ່ງ ທາງບົກ ແລະ ທາງນໍ້າ, ວຽກງານເຄຫາ ຜັງເມືອງ ແລະ ນໍ້າປະປາ. ຈຸດເລີ່ມຕົ້ນຂອງພວກເຮົາທີ່ລະບອບເກົ່າປະໄວ້ ແມ່ນມີພື້ນຖານຕໍ່າຫລາຍ ຊຶ່ງສະແດງໃຫ້ເຫັນວ່າ ໃນປີ 1976 ລະບົບເສັ້ນທາງບົກໃນ ສປປ ລາວ ມີລວງຍາວທັງໝົດ11 462 ກມ ໃນນີ້ສູນກາງຄຸ້ມຄອງ 2 078 ກມ ແລະ ທ້ອງຖິ່ນຄຸ້ມຄອງ 9 384 ກມ ຊຶ່ງສາມາດຈຳແນກທາງແຕ່ລະປະເພດໄດ້ດັ່ງນີ້: ທາງປູ ຢາງມີ 1 427 ກມ ສ່ວນເຫລືອນັ້ນ ເປັນທາງປູດ້ວຍຫີນ ແລະ ດິນ. ໃນປີ 1976 ໄດ້ເກີດມີໜໍ່ແໜງ
ໃໝ່ກ່ຽວກັບການຂົນສົ່ງທາງບົກ ຊຶ່ງຢູ່ໃນໄລຍະນັ້ນ ການຂົນສົ່ງຍັງບໍ່ທັນຂະຫຍາຍຕົວສູງ ເຮັດໃຫ້ມີບໍລິມາດຂົນສົ່ງຍັງຈຳກັດຫລາຍ ລວມແລ້ວໃນເວລານັ້ນ ມີ 229.7 ພັນໂຕນ.

ໃນໄລຍະຈັດຕັ້ງປະຕິບັດແຜນການ 3 ປີ (1978-1980) ແຫ່ງການຟື້ນຟູ ແລະ ຂະຫຍາເສດ ຖະກິດຂອງ ສປປ ລາວ ໂດຍໄດ້ດຳເນີນບາດກ້າວເບື້ອງຕົ້ນກ່ຽວກັບການປະຕິບັດໂຄງການຂອງ ພັກ ໃນການດັດສ້າງເສດຖະກິດໃຫ້ໄປຕາມເສັ້ນທາງສັງຄົມນິຍົມ ໃນການຂະຫຍາຍກຳລັງການຜະລິດແລະ ການເພີ່ມທະວີເຫງົ້າພະລັງທາງເສດຖະກິດຂອງລັດ, ການປັບປຸງດ້ານການພົວພັນການຜະລິດ. ກະ ຊວງຄົມມະນາຄົມ ໂຍທາ ແລະ ຂົນສົ່ງ ກໍໄດ້ປະກອບສ່ວນອັນສຳຄັນໃນການກໍ່ສ້າງໂຄງການໃຫຍ່ ຈຳນວນໜຶ່ງ ເພື່ອສ້າງປະຖົມປັດໃຈ ກ້າວຂຶ້ນສັງຄົມນິຍົມ ເປັນຕົ້ນແມ່ນໄດ້ກໍ່ສ້າງນໍ້າງື່ມຂັ້ນສອງ, ໂຮງ ງານຫົວອາຫານສັດ, ອ່າງເກັບນໍ້າມັນ, ໂຮງງານຢາວັກແຊງ, ໂຮງງານສ້ອມແປງກົນຈັກ, ໂຮງງານ ອາຫານເດັກນ້ອຍ, ໂຮງງານເຮັດເຄື່ອງເຮືອນ.

ກະຊວງຄົມມະນາຄົມ ໂຍທາ ແລະ ຂົນສົ່ງ ກໍໄດ້ເອົາໃຈໃສ່ປັບປຸງ ແລະ ຂະຫຍາຍຕາໜ່າງເສັ້ນທາງຂຶ້ນເປັນລຳດັບ ໂດຍໄດ້ຂະຫຍາຍເສັ້ນທາງຊົນນະບົດໄວກວ່າເສັ້ນທາງຕົວເມືອງແນໃສ່ປັບປຸງຊີວິດການເປັນຢູ່, ການໄປມາຫາສູ່ຂອງປະຊາຊົນ, ການຈະລາຈອນແຈກຢາຍ, ການຜະລິດລະຫວ່າງຊົນນະບົດກັບຕົວເມືອງ ແລະ ການເຊື່ອມຕໍ່ລະຫວ່າງຊົນນະບົດກັບຕົວເມືອງໃຫ້ລົ່ງລຸ່ນ, ວ່ອງໄວ ໂດຍໄດ້ເອົາໃຈໃສ່ປົກປັກຮັກສາ ແລະ ສ້ອມແປງ

ເສັ້ນທາງເກົ່າ (ທີ່ມີແລ້ວ) ເປັນຕົ້ນ ທາງເລກ 1, 2, 3, 4, 6 ແລະ 6 ເບ, 7, 8, 9, 10, 12 13 ແລະ ເສັ້ນທາງອື່ນອີກຈຳນວນໜຶ່ງ. ຍ້ອນມີຜົນງານ ແລະ ວຽກງານມີການເຕີບໃຫຍ່ຂະຫຍາຍຕົວ, ພັກ ແລະ ລັດຈຶ່ງ ຕົກລົງໃຫ້ມີການປັບປຸງການຈັດຕັ້ງຂອງກະຊວງຄົມມະນາຄົມ ໂຍທາ ແລະ ຂົນສົ່ງເພື່ອຕອບສະໜອງກັບຄວາມ ຮຽກຮ້ອງຕ້ອງການຂອງ ປະເທດຊາດໃນໄລຍະໃໝ່.